## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 16 ມິຖຸນາ 2024 (06-16-2024)

---

### ພຣະສັນຍາຂອງພຣະເຈົ້າເລື່ອງພຣະພອນ

**ຈຸດສຳຄັນໃນບົດຮຽນ:** ພຣະເຈົ້າໄດ້ຊົງສັນຍາວ່າຈະຊົງອວຍພຣະພອນທຸກຄົນຜ່ານຜູ້ຄົນທີ່ພຣະອົງໄດ້ຊົງເລືອກໄວ້.

**ພຣະຄັມພີຕອບສນອງຊີວິດ:**

ແຜນການແຫ່ງຄວາມລອດພົ້ນຂອງພຣະເຈົ້າລວມເຖິງອັບຣາຮາມແລະເຊື້ອສາຍຂອງເພິ່ນ-ທ້າຍທີ່ສຸດຄືຊົນຊາດອິສຣາເອນ-ຊຶ່ງເປັນທໍ່ທາງຝ່າຍຈິດວິນຍານຂອງພຣະອົງ. ການຊົງເລືອກບັນດາຄົນເຫຼົ່ານີ້ຂອງພຣະເຈົ້າບໍ່ໄດ້ໝາຍຄວາມວ່າພວກເພິ່ນດີກວ່າຄົນອື່ນໆ ແຕ່ພຣະເຈົ້າໄດ້ຊົງເລືອກພວກເຂົາເຈົ້າເພື່ອເປັນເຄື່ອງມືພິເສດຂອງພຣະອົງ. ໂດຍຜ່ານທາງຄົນເຫຼົ່ານີ້, ພຣະເຈົ້າຈະຊົງນຳເອົາ <u>ພຣະຜູ້ຊ່ອຍໃຫ້ລອດພົ້ນ</u> ຄື **ພຣະເຢຊູ**ແລະຜ່ານທາງພຣະເຢຊູ, ພຣະເຈົ້າຈະຊົງນຳເອົາຄວາມຫວັງຂອງຄວາມສັມພັນແຫ່ງຄວາມລອດພົ້ນກັບພຣະອົງໄປສູ່ຄົນທັງໂລກ. <u>ກ່າວໂດຍສລຸບ</u>, ພຣະເຈົ້າໄດ້ຊົງສັນຍາວ່າຈະຊົງອວຍພຣະພອນປະຊາຊົນທັງໝົດຜ່ານທາງບັນດາຜູ້ຄົນທີ່ພຣະອົງໄດ້ຊົງເລືອກໄວ້.

ປຶ້ມພຣະຄັມພີ **ປະຖົມມະການ** ບັນທຶກວິທີທີ່ພຣະເຈົ້າຊົງສັນຍາກັບ ອັບຣາຮາມວ່າໂດຍຜ່ານທາງລາວ, ພຣະພອນຂອງພຣະເຈົ້າຈະເຂົ້າມາສູ່ໂລກນີ້ຢ່າງໃດ. <u>ບົດຮຽນການສຶກສາວັນນີ້ປະກອບດ້ວຍຂໍ້ພຣະຄັມພີທີ່ມີຄວາມສຳຄັນຢ່າງຍິ່ງ ຕໍ່ພຣະປະສົງຂອງພຣະເຈົ້າ ໂດຍສ່ວນທີ່ເຫຼືອຂອງພຣະຄັມພີແມ່ນທັງໝົດກ່ຽວກັບການເປີດເຜີຍຄວາມໝາຍຂອງຂໍ້ພຣະຄັມພີຈຳນວນໜ້ອຍເຫຼົ່ານີ້</u>.

*ແມ່ນຫຍັງຄືສິ່ງອຳນວຍຄວາມສະດວກສະບາຍທີ່ທ່ານຂາດບໍ່ໄດ້?*

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ປະຖົມມະການ 12:1-3</u>

*1 ພຣະຜູ້ເປັນເຈົ້າໄດ້ຊົງບອກແກ່ອັບຣາມວ່າ: “ຈົ່ງອອກຈາກປະເທດຂອງເຈົ້າ ຈາກຍາດພີ່ນ້ອງ ແລະຈາກບ້ານຂອງເຈົ້າ ແລ້ວໄປໃນ*
*ປະເທດທີ່ເຮົາຈະບອກເຈົ້າ. 2 ເຮົາຈະໃຫ້ເຈົ້າມີເຊື້ອສາຍຫຼາຍຂຶ້ນແລ້ວເກີດເປັນຊົນຊາດໃຫຍ່ເຮົາຈະອວຍພອນໃຫ້ເຈົ້າເປັນຜູ້ທີ່ມີຊື່ສຽງ*
*ແລະຜູ້ອື່ນຈະໄດ້ຮັບພອນຍ້ອນເຈົ້າ. 3 ເຮົາຈະອວຍພອນຜູ້ທີ່ອວຍພອນເຈົ້າ ແຕ່ເຮົາຈະສາບແຊ່ງຜູ້ທີ່ສາບແຊ່ງເຈົ້າ. ທຸກໆຊົນຊາດໃນ*
*ໂລກຈະຂໍໃຫ້ເຮົາອວຍພອນພວກເຂົາເໝືອນດັ່ງເຮົາໄດ້ອວຍພອນໃຫ້ພວກເຈົ້າ.”*

ຊີວິດຂອງພວກເຮົາທຸກຄົນມີ<u>ຊ່ວງເວລາທີ່ກຳນົດ</u>-ຊ່ວງເວລາອັນໃດອັນນຶ່ງທີ່ກຳນົດທິດທາງຊີວິດຂອງພວກເຮົາຢ່າງເຫັນໄດ້ຊັດເຈນ. ຊ່ວງເວລາທີ່ກຳນົດມີດັ່ງຕໍ່ລົງໄປນີ້ ແຕ່ມີຫຼາຍກວ່ານັ້ນ:

- **ການຍອມຮັບເອົາຂໍ້ສເນີແຫ່ງຄວາມລອດຂອງພຣະເຈົ້າຜ່ານຄວາມເຊື່ອໃນອົງພຣະເຢຊູ.**
- **ການແຕ່ງງານ.**
- **ການເປັນພໍ່ແມ່.**

ການຊົງຮຽກເອີ້ນ ອັບຣາມ(ຕໍ່ມາເປັນ ອັບຣາຮາມ)ແມ່ນນຶ່ງໃນຊ່ວງເວລາທີ່ກຳນົດໄວ້ໃນພຣະຄັມພີ. ທຸກສິ່ງທຸກຢ່າງໃນແຜນການຂອງພຣະເຈົ້າໃນການຊົງໄຖ່ໂລກ ຫຼັ່ງໄຫຼມາຈາກຊ່ວງເວລາທີ່ກຳນົດ ທັງໃນພັນທະສັນຍາເດີມ ແລະໃນພັນທະສັນຍາໃໝ່. ໃນກຸງເຢຣູຊາເລັມໃໝ່, ຊື່ຂອງບັນດາເຫຼັນ(great-grandsons)ຂອງອັບຣາຮາມຈະປະດັບຢູ່ທີ່ປະຕູເມືອງ (ພນມ 21:12). **ພວກເຮົາຍັງຈະເວົ້າກ່ຽວ**

**ກັບອັບຣາຮາມຢູ່ໃນສວັນ!** ການຊົງຮຽກເອີ້ນຂອງພຣະເຈົ້າກຳນົດໃຫ້ອັບຣາຮາມຕ້ອງເຮັດບາງຢ່າງທີ່ຕໍ່ຕ້ານວັທນະທັມ, ບາງສິ່ງທີ່ບໍ່ເຄີຍເຮັດໃນຍຸກສມັຍຂອງລາວ. ພຣະເຈົ້າໄດ້ຊົງບັນຊາ(ສັ່ງ)ອັບຣາຮາມໃຫ້ອອກຈາກບ້ານເກີດເມືອງນອນ, ອອກຈາກສະຖານທີ່ເກີດ, ແລະອອກຈາກບ້ານພໍ່ຂອງລາວ. ພຣະເຈົ້າຍັງໄດ້ຊົງສັ່ງອັບຣາຮາມໃຫ້ໄປທີ່ແຜ່ນດິນທີ່ພຣະເຈົ້າຈະຊົງສະແດງໃຫ້ລາວເຫັນ. ດ້ວຍເຫດນີ້, ອັບຣາຮາມ "<u>ໄດ້ອອກໄປ</u>, <u>ເຖິງແມ່ນວ່າລາວບໍ່ຮູ້ວ່າລາວຈະມຸ່ງໜ້າໄປໃສ</u>" (ຮຣ 11:8). ລາວໄດ້ປະຖິ້ມປະຊາຊົນຂອງລາວໄປຢູ່ເມືອງ **ຮາຣານ** ແລະໄດ້ເດີນທາງຫຼາຍຮ້ອຍໄມລ໌ ກ່ອນລາວຈະມາເຖິງເມືອງນຶ່ງຊື່ວ່າ **ເຊເຄັມ** ໃນແຜ່ນດິນ**ການາອານ.** ຢູ່ທີ່ນັ້ນ, ພຣະເຈົ້າໄດ້ຊົງກ່າວກັບ ອັບຣາຮາມ ວ່າ: "<u>ເຮົາຈະໃຫ້ແຜ່ນດິນນີ້ແກ່ລູກຫຼານຂອງເຈົ້າ</u>" (ປຖກ 12:7). ພຣະເຈົ້າໄດ້ຊົງສັນຍາອີກດ້ວຍວ່າຈະຊົງເຮັດສິ່ງດັ່ງຕໍ່ລົງໄປນີ້ສຳລັບ ອັບຣາຮາມ(ຂໍ້ 2):

- **ຊົງເຮັດໃຫ້ລາວເກີດເປັນຊົນຊາດໃຫຍ່.**
- **ຊົງອວຍພຣະພອນໃຫ້ລາວ ແລະຊົງເຮັດໃຫ້ລາວເປັນທີ່ພຣະພອນໄປສູ່ຄົນອື່ນ.**
- **ຊົງເຮັດໃຫ້ລາວເປັນຜູ້ທີ່ມີຊື່ສຽງ.**

ພຣະເຈົ້າຈະເຮັດໃຫ້ອັບຣາມເປັນຊົນຊາດຍິ່ງໃຫຍ່ແນວໃດ? ອັບຣາມແລະເມັຽຂອງລາວ ຊາຣາຍ (ຕໍ່ມາເປັນ ຊາຣາ) ບໍ່ສາມາດມີລູກ (11:30), ແລະໃຜຜູ້ນຶ່ງບໍ່ສາມາດມີຊົນຊາດໄດ້ໂດຍປາສຈາກຜູ້ຄົນ! ພຣະເຈົ້າຈະຊົງເຮັດການມະຫັສຈັນໃນຊີວິດຂອງພວກເຂົາເຈົ້າໃນມື້ຂ້າງໜ້າແລະໃຫ້ພວກເພິ່ນມີລູກຊາຍ-ອີຊາກ. <u>ພຣະເຈົ້າໄດ້ຊົງມີພຣະປະສົງໃຫ້ທຸກຄົນຮູ້ວ່າຄອບຄົວນີ້ໄດ້ເລີ່ມຕົ້ນໂດຍພລັງອຳນາດຂອງພຣະອົງແລະສຳລັບຈຸດປະສົງຂອງພຣະອົງ</u>.

ພຣະເຈົ້າໄດ້ສັນຍາວ່າຈະຊົງອວຍພຣະພອນບັນດາຜູ້ທີ່ອວຍພຣະພອນອັບຣາມ ແລະສາບແຊ່ງບັນດາຜູ້ທີ່ສາບແຊ່ງລາວດ້ວຍຄວາມໝິ່ນປມາດ (12:3). **ພຣະຜູ້ເປັນເຈົ້າແລະອັບຣາມມີຄວາມສັມພັນພິເສດແທ້ໆ!** ພຣະຄັມພີຕໍ່ມາກ່າວເຖິງ **<u>ອັບຣາຮາມ</u>** ວ່າເປັນ **<u>ເພື່ອນ</u>**("ມິດສະຫາຍ")ຂອງພຣະເຈົ້າ (2 ຂຄວ 20:7; ອຊຢ 41:8; ຢກບ 2:23), ແລະພຣະເຈົ້າຈະຊົງເບິ່ງແຍງສະຫາຍຂອງພຣະອົງ. ພຣະເຈົ້າໄດ້ຊົງບອກອັບຣາມ, "ທຸກໆຊົນຊາດໃນໂລກຈະຖືກອວຍພອນຜ່ານທາງເຈົ້າ"(ປຖກ 12:3). ພັນທະສັນຍາຂອງພຣະເຈົ້ານຳພຣະພອນມາສູ່ພວກເຮົາທັງໝົດ ດ້ວຍເຫດວ່າພຣະພອນແຫ່ງພັນທະສັນຍາຂອງອັບຣາມແມ່ນ **ພຣະເຢຊູ**, ຊຶ່ງຊົງເປັນລູກຫຼານ(ເຊື້ອສາຍ)ຂອງອັບຣາມ. ໂດຍຜ່ານທາງອົງພຣະເຢຊູ, ພວກເຮົາທຸກຄົນອາດຈະເຂົ້າສູ່ຄວາມສັມພັນຕາມພັນທະສັນຍາກັບພຣະເຈົ້າ. **<u>ພັນທະສັນຍາຂອງພຣະເຈົ້າກັບອັບຣາມນຳພຣະພອນມາສູ່ພວກເຮົາທຸກຄົນຜ່ານທາງພຣະເຢຊູຄຣິດ</u>.** ນັ້ນຄືເຫດຜົນທີ່ຂໍ້ພຣະຄັມພີຈາກປະຖົມມະການ ເຫຼົ່ານີ້ຖືເປັນຊ່ວງເວລາສຳຄັນ, ບໍ່ພຽງແຕ່ສຳລັບອັບຣາຮາມເທົ່ານັ້ນ, ແຕ່ຍັງສຳລັບແຜນການແຫ່ງຄວາມລອດພົ້ນຂອງພຣະເຈົ້າສຳລັບຄົນທັງໂລກດ້ວຍ.

*ເມື່ອໃດທີ່ທ່ານເຫັນໃຜຜູ້ນຶ່ງໄດ້ຮັບພຣະພອນທີ່ກາຍເປັນພຣະພອນໃຫ້ແກ່ຄົນອື່ນ?*

## 2. <u>ປະຖົມມະການ 15:5-7</u>

*5 ພຣະຜູ້ເປັນເຈົ້າໄດ້ພາເພິ່ນຍ່າງອອກໄປທາງນອກແລະເວົ້າວ່າ, "ຈົ່ງນັບດວງດາວຢູ່ທ້ອງຟ້າທີ່ເຈົ້າເຫັນຢູ່ນັ້ນເບິ່ງດູ ນັບໄດ້ບໍ? ເຈົ້າຈະ*
*ມີເຊື້ອສາຍຫຼາຍຄືກັນກັບດວງດາວເຫຼົ່ານັ້ນ."*
*6 ອັບຣາມກໍເຊື່ອຟັງພຣະຜູ້ເປັນເຈົ້າຍ້ອນຄວາມເຊື່ອນັ້ນພຣະອົງຈຶ່ງຊົງຖືວ່າເພິ່ນເປັນຜູ້*
*ຊອບທັມ.*
*7 ຄັນຕໍ່ມາພຣະຜູ້ເປັນເຈົ້າຊົງກ່າວແກ່ ອັບຣາມວ່າ, "ເຮົາແມ່ນພຣະຜູ້ເປັນເຈົ້າ ຜູ້ນຳເຈົ້າໜີອອກຈາກເມືອງ ອູເຣ ປະເທດ*
*ຄານເດອາ ເພື່ອຈະໃຫ້ປະເທດນີ້ເປັນຂອງເຈົ້າ."*

ບາງເທື່ອຊີວິດນຳມາໃຫ້ການທ້າທາຍທີ່ສະຖານະການເບິ່ງຄືວ່າຊີ້ບອກເຖິງຜົນລັບອັນນຶ່ງ, ແຕ່ພຣະຄຳຂອງພຣະເຈົ້າເພື່ອເຮັດໃຫ້ສິ່ງນັ້ນ(ຊາດທີ່ຍິ່ງໃຫຍ່)ເກີດຂຶ້ນ, ແລະສະພາບການເບິ່ງຄືວ່າບໍ່ດີເມື່ອພຣະເຈົ້າໄດ້ຊົງແນະນຳໃນເບື້ອງຕົ້ນ. ພຣະເຈົ້າໄດ້ຊົງໄປຢ້ຽມຢາມອັບຣາມໃນນິມິດໝາຍແລະຊົງບອກລາວວ່າບໍ່ຕ້ອງຢ້ານ. ອັບຣາມໄດ້ສາລະພາບການລົ້ມລຸກຄຸກຄານຂອງຕົນຕໍ່ພຣະເຈົ້າ. ມັນເບິ່ງຄືວ່າຜູ້ຮັບໃຊ້ຊັ້ນນຳຂອງເພິ່ນຈະສືບທອດມູນມໍລະດົກຂອງລາວ, ແລະຖ້າເປັນດັ່ງນັ້ນ, ຄຳສັນຍາຂອງພຣະເຈົ້າຈະຫຼົ້ມເຫຼວ. **ແຕ່**

**ວ່າສິ່ງນັ້ນບໍ່ສາມາດເກີດຂຶ້ນໄດ້, ແລະມັນຈະບໍ່ເປັນດັ່ງນັ້ນ.**

ພຣະເຈົ້າໄດ້ຊົງເຮັດໃຫ້ອັບຣາມໝັ້ນໃຈວ່າ: "ຜູ້ທີ່ມາຈາກຮ່າງກາຍຂອງເຈົ້າເອງຈະເປັນຜູ້ສືບທອດມູນມໍລະດົກຂອງເຈົ້າ" (ປຖກ 15:4). ພຣະຄັມພີ ປະຖົມມະການ ບົດທີ່ 16 ບັນທຶກວິທີທີ່ອັບຣາມແລະຊາຣາຍມີລູກຄັ້ງທຳອິດໂດຍນາງ ຮາກາຂ້າໃຊ້ຂອງຊາຣາຍ (16:1-2). ບາງທີພວກເຂົາເຈົ້າອາດຫາເຫດຜົນເຂົ້າຂ້າງຕົນເອງວ່າ ອັບຣາມ ຈະຍັງຄົງເປັນພໍ່, ແລະໂດຍທາງກົດໝາຍ, ເດັກນ້ອຍນັ້ນອາດກັບກາຍມາເປັນລູກຂອງຊາຣາຍ. ສະຖານະການ "ແມ່ຕົວແທນ"("surrogate mother")ນີ້ໄດ້ເປັນທີ່ຮູ້ຈັກໃນຍຸກສມັຍຂອງພວກເຂົາເຈົ້າແລະຍັງເປັນຢູ່ໃນສມັຍປະຈຸບັນນີ້. ແຕ່ນີ້ແມ່ນວິທີທີ່ພຣະເຈົ້າຈະຊົງເຮັດຕາມພຣະສັນຍາຂອງພຣະອົງຫຼືບໍ່? ຄຳຕອບກໍ່ຄື: **<u>ບໍ່ແມ່ນ</u>**. ພຣະເຈົ້າໄດ້ຊົງທ້າທາຍອັບຣາມໃຫ້ມອງເບິ່ງສວັນແລະນັບດວງດາວ-ບາງສິ່ງບາງຢ່າງທີ່ອັບຣາມບໍ່ສາມາດເຮັດໄດ້. ຈາກນັ້ນພຣະເຈົ້າໄດ້ຊົງບອກລາວວ່າ: "ລູກຫຼານຂອງເຈົ້າຈະເປັນຈຳນວນຫຼາຍດັ່ງດວງດາວນັ້ນ" (15:5). ຕອນນີ້ ອັບຣາມມີທາງເລືອກ: ລາວຈະເລືອກເຊື່ອສິ່ງທີ່ລາວຮູ້ກ່ຽວກັບຊີວະວິທຍາ(biology)ຂອງມະນຸດ, ຫຼືລາວຈະເລືອກເຊື່ອພຣະສັນຍາຂອງພຣະເຈົ້າ. ອັບຣາມ <u>ເລືອກເຊື່ອພຣະສັນຍາຂອງພຣະເຈົ້າ</u>. ອັບຣາມໄດ້ເຊື່ອແລະໄວ້ວາງໃຈພຣະເຈົ້າແລະໄດ້ຮັບເອົາພຣະຄຳຂອງພຣະອົງ: ທີ່ວ່າ**<u>ລາວຈະມີເຊື້ອສາຍແລະເປັນທໍ່ພຣະພອນຂອງພຣະເຈົ້າໄປສູ່ຜູ້ຄົນທັງໝົດ</u>**.

ເມື່ອອັຄສາວົກ ໂປໂລ ໄດ້ຂຽນພຣະຄັມພີ **ໂຣມ**, ເພິ່ນໄດ້ອ້າງເຖິງພຣະຄັມພີ **ປະຖົມມະການ** 15:6 ເປັນສ່ວນນຶ່ງຂອງການສົນທະນາກ່ຽວກັບ**<u>ຄວາມລອດພົ້ນດ້ວຍພຣະຄຸນໂດຍທາງຄວາມເຊື່ອ</u> (Salvation by Grace through Faith)**. ເພິ່ນໄດ້ປະກາດວ່າຄວາມ<u>ລອດພົ້ນເປັນຂອງຂວັນຈາກພຣະເຈົ້າ</u> (ຂອງປະທານທີ່ໄດ້ລ້າໆຈາກພຣະເຈົ້າ) ບໍ່ແມ່ນຈາກວຽກງານດີໃດໆ ທີ່ພວກເຮົາອາດໄດ້ເຮັດ (ໂຣມ 3:24-28). ພຣະເຈົ້າໄດ້ຊົງໃຊ້ <u>ອັບຣາຮາມ</u> <u>ບັນພະບຸຣຸດແຫ່ງຄວາມເຊື່ອຂອງພວກເຮົາ</u> ເປັນຕົວຢ່າງຂອງບັນດາຜູ້ທີ່ໄວ້ວາງໃຈໃນພຣະສັນຍາຂອງພຣະເຈົ້າຢ່າງເຕັມທີ່, ແລະພຣະອົງໄດ້ນັບລາວເປັນຄົນຊອບທັມໃນພື້ນຖານນັ້ນ(4:18-22). ຈາກນັ້ນ, ໂປໂລໄດ້ສລຸບວ່າ: <u>ພຣະສັນຍາຂອງພຣະເຈົ້າແຫ່ງຄວາມລອດພົ້ນແມ່ນສຳລັບທຸກຄົນທີ່ເຊື່ອເໝືອນດັ່ງອັບຣາຮາມ</u>(4:23-25). ພຣະເຈົ້າພວມຊົງສະແດງໃຫ້ອັບຣາມໄດ້ເຫັນວ່າພຣະອົງຈິງຈັງໃນການໃຫ້ພຣະກຽດແຫ່ງພຣະວັຈນະ(ພຣະຄຳ)ຂອງພຣະອົງ. ພຣະອົງຊົງໄດ້ຢືນຢັນ ພັນທະສັນຍາ ຂອງພຣະອົງຄືນໃໝ່ໃນລັກສນະນີ້ ເພື່ອຊ່ອຍໃຫ້ອັບຣາຮາມໄວ້ວາງໃຈໃນພຣະອົງແລະຮັບເອົາພຣະວັຈນະຂອງພຣະອົງ.

*ແມ່ນຫຍັງໄດ້ຊ່ອຍເຫຼືອທ່ານໃຫ້ໄວ້ວາງໃຈໃນພຣະສັນຍາຂອງພຣະເຈົ້າ?*

## 3. <u>ປະຖົມມະການ 17:7-11</u>

*7 ເຮົາຈະຖືຮັກສາຄຳໝັ້ນສັນຍາຂອງເຮົາທີ່ມີຕໍ່ເຈົ້າ ແລະຕໍ່ເຊື້ອສາຍຂອງເຈົ້າໃນເຊັ່ນຄົນຕໍ່ມາ ໃຫ້ເປັນຄຳໝັ້ນສັນຍາອັນຕລອດໄປເປັນນິດ. ເຮົາຈະເປັນພຣະເຈົ້າຂອງເຈົ້າ ແລະເປັນພຣະເຈົ້າຂອງເຊື້ອສາຍຂອງເຈົ້າດ້ວຍ. 8 ເຮົາຈະໃຫ້ດິນທີ່ເຈົ້າອາສັຍຢູ່ໃນປະຈຸບັນຖານະຊາວຕ່າງດ້າວນີ້ໃຫ້ແກ່ເຈົ້າ ແລະເຊື້ອສາຍຂອງເຈົ້າດິນແດນ ການາອານ ທັງໝົດຈະເປັນຂອງພວກເຈົ້າຕລອດໄປ, ແລະເຮົາກໍຈະເປັນພຣະເຈົ້າຂອງພວກເຈົ້າ." 9 ພຣະເຈົ້າຊົງກ່າວກັບອັບຣາຮາມວ່າ, "ເຈົ້າເອງກໍດີ, ເຊື້ອສາຍຂອງເຈົ້າໃນເຊັ່ນຕໍ່ໄປກໍດີ ຈົ່ງຮັກສາຄຳໝັ້ນສັນຍາຂອງເຮົາ. 10 ອັນນີ້ແມ່ນສິ່ງທີ່ເຈົ້າ ແລະເຊື້ອສາຍຂອງເຈົ້າຕ້ອງປະຕິບັດ ຄືຜູ້ຊາຍທຸກຄົນໃນພວກເຈົ້າຕ້ອງເຂົ້າພິທີຕັດ. 11 ຕັ້ງແຕ່ບັດນີ້ໄປ, ເຈົ້າຈະຕ້ອງເຮັດພິທີຕັດໃຫ້ແກ່ຜູ້ຊາຍທຸກໆຄົນເມື່ອພວກເຂົາອາຍຸໄດ້ແປດມື້ ທັງເດັກທີ່ເກີດມາຈາກພວກຂ້າໃຊ້ ແລະຂ້ອຍຂ້າທີ່ໄຖ່ມາຈາກຊາວຕ່າງດ້າວ. ການກະທຳເຊັ່ນນີ້ຈະສະແດງວ່ານັ້ນແມ່ນການສັນຍາລະຫວ່າງເຈົ້າກັບເຮົາ.*

ທ່ານເຄີຍໄດ້ອະທິຖານເພື່ອການຊົງນຳພາຂອງພຣະເຈົ້າບໍ່? ທ່ານຕັ້ງໃຈວ່າທ່ານຮູ້ສິ່ງນັ້ນແມ່ນຫຍັງ, ແລະຈາກນັ້ນທ່ານຄຶດສະເດືອກໄດ້ວ່າທ່ານຜິດ. ບາງຄັ້ງສິ່ງທີ່ສົມເຫດສົມຜົນສາມາດເປັນພຣະປະສົງຂອງພຣະເຈົ້າ, ບາງຄັ້ງກໍ່ບໍ່ເປັນຢ່າງນັ້ນ. ຈົ່ງລອງພິຈາລະນາເບິ່ງ ອັບຣາມ ແລະ ຊາຣາຍ (ຊາຣາ) ໃນພຣະຄັມພີ ປະຖົມມະການ ບົດທີ່ 16. ກົດໝາຍຂອງສມັຍນັ້ນອະນຸຍາດໃຫ້ເມັຽຄົນທີ່ສອງເຮັດໜ້າທີ່ເປັນແມ່ແທນເມັຽຄົນທຳອິດໄດ້. ຄົນໃຊ້ຂອງຊາຣາ, ຮາກາ, ໄດ້ໃຫ້ກຳເນີດ ອິຊມາເອນ (Ishmael)ແກ່ອັບຣາມ, ແລະອີງຕາມກົດໝາຍ, ອິຊມາເອນ ເປັນລູກຊາຍຂອງຊາຣາ. ຂໍ້ສຸດທ້າຍຂອງພຣະຄັມພີ ປະຖົມມະການ ບົດທີ່ 16 ບອກວ່າ: "ອັບຣາມ

ມີອາຍຸໄດ້ 86 ປີເມື່ອນາງ ຮາກາ ໄດ້ລູກຊາຍ ອິຊມາເອນໃຫ້ແກ່ອັບຣາມ.” (ຂໍ້ 16). ຂໍ້ທຳອິດຂອງ ພຣະຄັມພີ ປະຖົມມະການ ບົດທີ່ 17 ບອກວ່າ ອັບຣາມ ມີອາຍຸໄດ້ 99 ປີ ເມື່ອພຣະເຈົ້າໄດ້ຊົງປາກົດແກ່ລາວອີກ. ພຣະຄັມພີບອກເຄັດລັບວ່າຕລອດ 13 ປີທີ່ອັບຣາມແລະຊາຣາ ຄິດວ່າ ອິຊມາເອນ ເປັນລູກຕາມພຣະສັນຍາຂອງພຣະເຈົ້າແມ່ນບໍ່? ຖ້າເປັນດັ່ງນັ້ນ, ພວກເຂົາເຈົ້າພວມຈະພົບວ່າພຣະເຈົ້າຊົງມີແຜນການອື່ນໆອີກ. ພຣະເຈົ້າໄດ້ຊົງຢືນຢັນອີກເທື່ອນຶ່ງວ່າ ອັບຣາມຈະກາຍເປັນພໍ່ຂອງຫຼາຍປະເທດຊາດແລະພ້ອມຍັງໄດ້ຊົງປ່ຽນຊື່ຈາກ **<u>ອັບຣາມ</u>** ມາເປັນ **<u>ອັບຣາຮາມ</u>** (ປຖກ 17:4-5). ອັບຣາຮາມບໍ່ເຄີຍໄດ້ຮັບຄວາມສົມບູນຂອງຄຳສັນຍາຂອງພຣະເຈົ້າສຳລັບຕົນເອງ(ຮຣ 11:8-10,13). ຢ່າງໃດກໍ່ຕາມ, ລາວໄດ້ດຳເນີນຊີວິດຢູ່ໃນຄວາມເຊື່ອວ່າ: ມື້ນຶ່ງ, ເຊື້ອສາຍຂອງລາວຈະເຫັນມັນ(ຄວາມສົມບູນຂອງຄຳສັນຍາຂອງພຣະເຈົ້າ)ມາເຖິງພວກເຂົາເຈົ້າ.

*ມີທາງໃດແດ່ທີ່ດີສຳລັບຜູ້ເຊື່ອທີ່ຈະຢືນຢົງຄົງຢູ່ໃນຄວາມແຕກຕ່າງໃນໂລກນີ້?*

ພຣະເຈົ້າຊົງຮຽກເອີ້ນປະຊາກອນຂອງພຣະອົງໃຫ້ແຕກຕ່າງແລະການປະຕິບັດຕາມພຣະບັນຊາ(ຄຳສັ່ງ)ຂອງພຣະອົງເຮັດໃຫ້ພວກເຮົາແຕກຕ່າງຈາກສ່ວນອື່ນໆຂອງໂລກ. ພວກເຮົານັບຖືວັນນະມັສການເມື່ອບັນດາຊາວໂລກຖືວ່າມັນເປັນພຽງອີກວັນນຶ່ງ. ພວກເຮົາຖວາຍຊັບທາງການເງິນຂອງພວກເຮົາໃຫ້ກັບຄຣິສຕະຈັກທ້ອງຖິ່ນ ໃນເມື່ອບັນດາຄົນອື່ນໆໃຊ້ຊັບພະຍາກອນຂອງພວກເພິ່ນເພື່ອຕົນເອງ. ພວກເຮົາພຍາຍາມປະຕິບັດຕາມຄວາມສັດຊື່ ໃນເວລາທີ່ບັນດາຫຼາຍຄົນໃນໂລກເຮັດທຸກສິ່ງທີ່ພວກເຂົາເຈົ້າສາມາດເຮັດໄດ້(ໂດຍບໍ່ມີຜົນກະທົບ). ພວກເຮົາພຍາຍາມໃຫ້ການແຕ່ງງານຂອງພວກເຮົາໃຫ້ເປັນພຣະກຽດຕິຍົດແກ່ພຣະເຈົ້າໃນຂນະທີ່ຫຼາຍຄົນລົດຄຸນຄ່າຂອງການແຕ່ງງານ. **ພວກເຮົາເຫັນບັນດາເດັກນ້ອຍເປັນພຣະພອນແທນທີ່ຈະເປັນຄວາມບໍ່ສະດວກສະບາຍ.**

*ພວກເຮົາຈະຊ່ວຍກັນໄດ້ແນວໃດໃນການດຳເນີນຊີວິດທີ່ແຕກຕ່າງແຕ່ຍັງເປີດໃຈໃຫ້ຄົນອື່ນຢູ່?*

## ນຳໃຊ້ໃນຊີວິດ

ພຣະເຈົ້າໄດ້ຊົງສັນຍາວ່າຈະຊົງອວຍພຣະພອນທຸກຄົນຜ່ານຜູ້ຄົນທີ່ພຣະອົງໄດ້ຊົງເລືອກໄວ້. ຈົ່ງໃຊ້ນຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

- **ຈົ່ງໃຊ້ເວລາສັນຣະເສີນແລະຂອບພຣະຄຸນພຣະຜູ້ຊ່ອຍໃຫ້ລອດພົ້ນຂອງທ່ານ.** ທ່ານຢູ່ໃນພັນທະສັນຍາກັບພຣະເຈົ້າໂດຍຜ່ານພຣະເຢຊູຄຣິດຫຼືບໍ່? ຖ້າເປັນດັ່ງນັ້ນ, ຈົ່ງສັຣເສີນແລະຂອບພຣະຄຸນພຣະເຈົ້າ. ຖ້າບໍ່ເປັນດັ່ງນັ້ນ, ໃຫ້ທ່ານປຶກສາກັບແຜນການແຫ່ງຄວາມລອດພົ້ນ. ຈົ່ງເວົ້າກັບບາງຄົນໃນຫ້ອງຮຽນຂອງທ່ານ, ເວົ້າກັບຄູສອນໂຮງຮຽນວັນອາທິດຂອງທ່ານ, ຫຼືສິດຍາພິບານຂອງທ່ານກ່ຽວກັບຂັ້ນຕອນຕໍ່ໄປທີ່ທ່ານສົມຄວນຈະເຮັດ.
- **ຈົ່ງໃຊ້ເວລາປະເມີນສິ່ງທີ່ຂັດຂວາງພຣະພອນຈາກການໄຫລອອກຈາກຊີວິດຂອງທ່ານໄປສູ່ຜູ້ອື່ນ.** <u>ເປັນຕົ້ນ</u>: ຄວາມຂົມຂື່ນ, ຄວາມສົງສານຕົນເອງ, ຄວາມເຫັນແກ່ຕົວ, ຄວາມຢ້ານກົວ, ແລະອື່ນໆ...ຈົ່ງເຮັດວຽກຮ່ວມກັບພຣະເຈົ້າໃນການສາລະພາບແລະການຖິ້ມໃຈເກົ່າເອົາໃຈໃໝ່ເພື່ອຈະລົບລ້າງອຸປສັກເຫຼົ່ານັ້ນ, ເພື່ອທີ່ທ່ານຈະສາມາດເປັນ<u>ທໍ່ພຣະພອນ</u>ຂອງພຣະເຈົ້າໄປສູ່ຄົນອື່ນໆ.
- **ຈົ່ງໃຊ້ເວລາໃນການພິຈາລະນາ.** ຈົ່ງພິຈາລະນາວ່າທ່ານສາມາດດຳເນີນຊີວິດທີ່ແຕກຕ່າງຊຶ່ງແຍກທ່ານອອກຈາກຊາວໂລກໃນຖານະທີ່ເປັນຂອງພຣະຄຣິດ: ຊີວິດທີ່ມີຄວາມຮັກແລະມີພຣະຄຸນທີ່ເຮັດໃຫ້ຄົນອື່ນຢາກເປັນຂອງພຣະຄຣິດເຊັ່ນດຽວກັບທ່ານ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**